ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກວດກາສູນກາງພັກ ເລກທີ 151 /ຄກສພ

ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ

- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກວດກາສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 19 ມັງກອນ 2022;
- ອີງຕາມ ກົດໝາຍວ່າດ້ວຍ ການກວດກາລັດ (ສະບັບປັບປຸງ) ສະບັບເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ-ພະນັກງານ.

**ປະທານ ຄະນະກວດກາສູນກາງພັກ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ແນໃສ່ການຈັດຕັ້ງປະຕິບັດວຽກງານຕິດຕາມ, ກວດກາ, ຊຸກຍູ້ ເພື່ອເຮັດໃຫ້ການແກ້ໄຂຜົນການກວດກາ ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ມີຕົວອັກສອນຫຍໍ້ (ກຕປກ) ແມ່ນກົງຈັກໜຶ່ງຂອງ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ມີພາລະບົດບາດເປັນເສນາທິການໃຫ້ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ໃນການຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຜົນຂອງການກວດກາພັກ-ລັດ, ຕາມມະຕິກອງປະຊຸມສະພາແຫ່ງຊາດ ແລະ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ເດັດຂາດຄະດີສໍ້ລາດບັງຫຼວງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດ



SCANNED WITH WIZSCAN

ໝາຍຂອງລັດ, ນິຕິກຳລຸ່ມກົດໝາຍ ແລະ ແຜນພັດທະນາຂະແໜງການ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຫັນເປັນຂໍ້ກຳນົດ, ລະບຽບການ, ວິທີການ, ມາດຕະການກ່ຽວກັບການດຳເນີນການຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ໃຫ້ຖືກຕ້ອງຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ;

2. ຄົ້ນຄວ້າ, ສະເໜີປັບປຸງພາລະບົດບາດ, ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ສະເໜີສ້າງ ຫຼື ປັບປຸງບັນດານິຕິກຳໃຕ້ກົດໝາຍກ່ຽວກັບວຽກງານຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ຕໍ່ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;
4. ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ຄຳສັ່ງ, ບົດແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ;
5. ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຜົນຂອງການກວດກາ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ໄດ້ຕົກລົງແກ້ໄຂ;
6. ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຜົນການກວດກາຕາມຜົນການກວດສອບ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຕາມການສະເໜີຂອງອົງການກວດສອບແຫ່ງລັດ;
7. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຜົນການກວດກາ ຢູ່ຂັ້ນກະຊວງ, ຂັ້ນແຂວງ ແລະ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ເດັດຂາດຄະດີສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ;
8. ຕິດຕາມ, ກວດກາ ແລະ ຊຸກຍູ້ ຄະນະພັກ, ຄະນະນຳກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງ ໃນການນຳພາ ການປະຕິບັດຜົນການກວດກາພັກ, ກວດກາລັດ ແລະ ຕິດຕາມ, ກວດກາຄວາມຮັບຜິດຊອບໜ້າທີ່ການເມືອງ ຕໍ່ການແກ້ໄຂຜົນການກວດກາ;
9. ຕິດຕາມ, ກວດກາ ແລະ ຊຸກຍູ້ ຄະນະພັກ, ຄະນະນຳກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງ ກ່ຽວກັບການພິຈາລະນາຕົກລົງແກ້ໄຂຜົນການກວດກາ ໃນກໍລະນີບໍ່ແກ້ໄຂຜົນການກວດກາ ຫຼື ແກ້ໄຂບໍ່ຖືກຕ້ອງຕາມກົດລະບຽບພັກ ແລະ ກົດໝາຍຂອງລັດ;
10. ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຜົນການກວດກາ ກ່ຽວກັບການລົງວິໄນຕໍ່ຄະນະພັກ, ສະມາຊິກພັກ, ການຈັດຕັ້ງພັກ ແລະ ພະນັກງານ-ລັດຖະກອນ ຢູ່ບັນດາກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງ ຕາມການຕົກລົງແກ້ໄຂ;
11. ປະສານສົມທົບເກັບກຳຂໍ້ມູນສະຖິຕິ ຜົນການກວດກາພັກ, ກວດກາລັດ, ສະຫຼຸບສັງລວມການປະຕິບັດຜົນການກວດກາ ຂອງການຈັດຕັ້ງກະຊວງ-ອົງການ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອລາຍງານ ແລະ ຂໍທິດຊີ້ນຳຈາກປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;
12. ສະຫຼຸບສັງລວມ, ຖອດຖອນບົດຮຽນ, ສະເໜີວິທີການ ແລະ ມາດຕະການແກ້ໄຂຜົນຂອງການກວດກາ ແລະ ລາຍງານສະພາບການເຄື່ອນໄຫວ ກ່ຽວກັບວຽກງານຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເພື່ອສະເໜີຂໍທິດຊີ້ນຳຈາກປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;
13. ສ້າງແຜນການ ແລະ ສະຫຼຸບການເຄື່ອນໄຫວຂອງກົມ ພ້ອມທັງລາຍງານປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ໃຫ້ເປັນປົກກະຕິ;



SCANNED WITH WIZSCAN

10. ມີສິດເຂົ້າຮ່ວມກອງປະຊຸມ ທີ່ພົວພັນເຖິງວຽກງານຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ ຂອງບັນດາກະຊວງ-ອົງການ, ແຂວງ, ນະຄອນຫຼວງ ຕາມການຕົກລົງ ຂອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກວດກາແຫ່ງລັດ;
11. ເປີດເຜີຍການແກ້ໄຂຜົນຂອງການກວດກາທີ່ໄດ້ຖືກຮັບຮອງ ແລະ ໄດ້ຮັບອະນຸຍາດຈາກປະທານຄະນະກວດກາສູນກາງພັກ, ອົງການກວດກາແຫ່ງລັດ ແລະ ຜູ້ຕົກລົງໃຫ້ກວດກາ ສາມາດເປີດເຜີຍ ດ້ວຍຮູບການໃດໜຶ່ງ ເຊັ່ນ: ແຈ້ງຂ່າວໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ, ແຈ້ງຜົນການກວດກາສູ່ສັງຄົມ ແລະ ດ້ວຍຮູບການອື່ນ;
12. ມີສິດນຳໃຊ້ງົບປະມານ, ພາຫະນະ, ວັດຖຸອຸປະກອນຮັບໃຊ້ຕ່າງໆ ເຂົ້າໃນການເຄື່ອນໄຫວວຽກງານຢ່າງມີປະສິດທິຜົນ;
13. ມີສິດລົງລາຍເຊັນເອກະສານຕ່າງໆ ທີ່ຂຶ້ນກັບສິດ ແລະ ຄວາມຮັບຜິດຊອບຂອງກົມ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກວດກາແຫ່ງລັດ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ພະແນກ ຄົ້ນຄວ້າ-ສັງລວມ;
2. ພະແນກ ຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເຂດ 1;
3. ພະແນກ ຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເຂດ 2.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າກົມ 01 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະເລຂາທິການສູນກາງພັກ ຕາມການສະເໜີຂອງປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ; ມີຄວາມຮັບຜິດຊອບໂດຍກົງ ຕໍ່ປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງ ໃນການນຳພາ-ຊີ້ນຳ ການປະຕິບັດພາລະບົດບາດ, ໜ້າທີ່, ຂອບເຂດສິດຂອງກົມ ແລະ ຕາມການມອບໝາຍ;

   ໃນເວລາຫົວໜ້າກົມຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງຮັກສາການແທນ;
2. ຮອງຫົວໜ້າກົມຈຳນວນໜຶ່ງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ບົນພື້ນຖານການເຫັນດີເປັນເອກະພາບກັບກະຊວງພາຍໃນ; ມີຄວາມຮັບຜິດຊອບໂດຍກົງ ຕໍ່ຫົວໜ້າກົມ ແລະ ຂັ້ນເທິງໃນການປະຕິບັດໜ້າທີ່ວຽກງານຂອງກົມ ຕາມການມອບໝາຍຂອງຫົວໜ້າກົມ ແລະ ຂັ້ນເທິງ; ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າກົມ;

   ຮອງຫົວໜ້າກົມຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະທີ່ຮັກສາການແທນນັ້ນ ໃຫ້ຫົວໜ້າກົມພາຍຫຼັງກັບມາປະຈຳການ;
3. ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ ຈຳນວນໜຶ່ງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຕາມການສະເໜີຂອງກົມຈັດຕັ້ງ-ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າກົມ ແລະ ຕາມການກຳນົດຕຳແໜ່ງງານ;



SCANNED WITH WIZSCAN

ມີຄວາມຮັບຜິດຊອບໂດຍກົງຕໍ່ຫົວໜ້າກົມ, ຮອງຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການປະຕິບັດວຽກງານ ຂອງພະແນກ, ຮັບຜິດຊອບວຽກງານທີ່ການຈັດຕັ້ງມອບໝາຍ;

4. ປະກອບມີພະນັກງານວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ພະແນກຄົ້ນຄວ້າ-ສັງລວມ**

ພະແນກຄົ້ນຄວ້າ-ສັງລວມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ ແລະ ແຜນດຳເນີນງານ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ເປັນເສນາທິການໃຫ້ແກ່ຄະນະກົມກ່ຽວກັບການສະຫຼຸບ-ສັງລວມ ແລະ ຫັນຂໍ້ກຳນົດ, ລະບຽບການ, ວິທີການ, ມາດຕະການກ່ຽວກັບການດຳເນີນການຕິດຕາມ, ກວດກາການປະຕິບັດຜົນການກວດກາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
2. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳຕ່າງໆກ່ຽວກັບວຽກງານຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ;
3. ຄົ້ນຄວ້າຮຽບຮຽງ ແລະ ຮ່າງບັນດາເອກະສານ ເຊັ່ນ: ແຈ້ງການ, ບົດແນະນຳ, ໃບສະເໜີ ແລະ ໜັງສືທາງລັດຖະການອື່ນໆ ເພື່ອສະເໜີຄະນະກົມຕົກລົງ;
4. ຄົ້ນຄວ້າ, ປັບປຸງ ພາລະບົດບາດ ແລະ ກຳນົດຕຳແໜ່ງງານ ຂອງພະແນກ ແລະ ກົມ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຂຶ້ນແຜນການບຳລຸງກໍ່ສ້າງພະນັກງານ-ລັດຖະກອນພາຍໃນກົມ ພ້ອມທັງຄົ້ນຄວ້າ ແລະ ສະເໜີການປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ພາຍໃນກົມ ເປັນຕົ້ນ: ລາພັກປະຈຳປີ, ເຈັບເປັນ, ເກີດລູກ ແລະ ອື່ນໆ;
6. ຄົ້ນຄວ້າ ແລະ ສະເໜີຄວາມຄິດເຫັນເບື້ອງຕົ້ນຕໍ່ບັນຫາໃດໜຶ່ງ ໃນເອກະສານຂາເຂົ້າ-ຂາອອກ ຂອງກົມກ່ອນຈະນຳສະເໜີຄະນະກົມພິຈາລະນາ;
7. ຄົ້ນຄວ້າ, ນຳສົ່ງ, ເກັບມ້ຽນ ແລະ ປົກປັກຮັກສາເອກະສານຕ່າງໆທີ່ຂຶ້ນກັບຄວາມຮັບຜິດຊອບຂອງກົມ;
8. ເກັບກຳສະຖິຕິ ກ່ຽວກັບວຽກຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ ຕາມການລາຍງານຂອງແຕ່ລະພະແນກ;
9. ຂຶ້ນແຜນການຄຸ້ມຄອງນຳໃຊ້ວັດຖຸອຸປະກອນ, ເຄື່ອງຮັບໃຊ້ຫ້ອງການ ແລະ ປົກປັກຮັກສາຊັບສິນບັດທີ່ຂຶ້ນກັບຄວາມຮັບຜິດຊອບຂອງກົມ;
10. ສ້າງແຜນການເຄື່ອນໄຫວປະຈຳເດືອນຂອງພະແນກ, ຮ່າງບົດສະຫຼຸບລາຍງານປະຈຳເດືອນ, 03 ເດືອນ, 06 ເດືອນ, 01 ປີ, 05 ປີຂອງກົມ;
11. ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ຂອງໜ່ວຍພັກປະຈຳເດືອນ, 03 ເດືອນ, 06 ເດືອນ, 01 ປີ, 05 ປີ;
12. ສ້າງແຜນການເຄື່ອນໄຫວໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ແລະ ສະຫຼຸບ ການປະເມີນໜ່ວຍພັກແຂງປະຈຳປີ;
13. ສະເໜີຄະນະພັກຂັ້ນເທິງ ພິຈາລະນາ, ຄົ້ນຄວ້າ ມະຫາຊົນກ້າວໜ້າຮຽນສະໜັບສະໜູນ, ຮຽນກົດລະບຽບພັກ, ເຂົ້າເປັນສະມາຊິກພັກສຳຮອງ ແລະ ເລື່ອນເປັນສະມາຊິກພັກສົມບູນ;



SCANNED WITH WIZSCAN

14. ເປັນເສນາທິການໃນການປະສານສົມທົບກັບພະແນກ ແລະ ພົວພັນວຽກງານອື່ນໆຂອງໜ່ວຍພັກ;
15. ປະສານສົມທົບກັບພາກສ່ວນຕ່າງໆທັງພາຍໃນ ແລະ ພາຍນອກ ຕາມຂອບເຂດສິດຄວາມຮັບຜິດຊອບ ແລະ ການມອບໝາຍຂອງກົມ;
16. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ພະແນກຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເຂດ 1**

ພະແນກຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເຂດ 1 ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ ແລະ ແຜນດຳເນີນງານ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ເປັນເສນາທິການໃຫ້ແກ່ຄະນະກົມກ່ຽວກັບການຫັນຂໍ້ກຳນົດ, ລະບຽບການ, ວິທີການ, ມາດຕະການ ກ່ຽວກັບການດຳເນີນການຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
2. ຕິດຕາມ, ຊຸກຍູ້ ການແກ້ໄຂຜົນຂອງການກວດກາ ຢູ່ 09 ກະຊວງ, 10 ອົງການ ແລະ 9 ແຂວງ ຄື: ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງຍຸຕິທຳ, ກະຊວງປ້ອງກັນປະເທດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາອົງການປະກອບມີ ຄະນະກວດກາສູນກາງພັກ, ອົງການກວດກາແຫ່ງລັດ ແລະ ຕ້ານການສໍ້ລາດບັງຫຼວງ, ສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ທະນາຄານແຫ່ງ ສປປ ລາວ, ສູນກາງສະຫະພັນແມ່ຍິງລາວ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ຫ້ອງວ່າການສູນກາງພັກ, ຄະນະພົວພັນຕ່າງປະເທດສູນກາງພັກ, ອົງການໄອຍະການປະຊາຊົນສູງສຸດ, ບັນດາທ້ອງຖິ່ນປະກອບມີແຂວງຜົ້ງສາລີ, ແຂວງອຸດົມໄຊ, ແຂວງຫຼວງນໍ້າທາ, ແຂວງບໍ່ແກ້ວ, ແຂວງຫຼວງພະບາງ, ແຂວງໄຊຍະບູລີ, ແຂວງຫົວພັນ, ແຂວງຊຽງຂວາງ ແລະ ແຂວງໄຊສົມບູນ;
3. ເກັບກຳຂໍ້ມູນ, ສະຖິຕິ ການຕິດຕາມ, ຊຸກຍູ້ ແລະ ການແກ້ໄຂຜົນຂອງການກວດກາພັກ, ກວດກາລັດ, ສະຫຼຸບສັງລວມການປະຕິບັດຜົນການກວດກາ ຂອງກະຊວງ-ອົງການ ແລະ ແຂວງ ທີ່ຂຶ້ນກັບຄວາມຮັບຜິດ ຊອບຂອງພະແນກ;
4. ເກັບກຳຂໍ້ມູນ, ສະຖິຕິ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຜົນການກວດກາ ຢູ່ຂັ້ນກະຊວງ, ຂັ້ນແຂວງ ແລະ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ເດັດຂາດຄະດີສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ;
5. ຕິດຕາມ, ຊຸກຍູ້ ການແກ້ໄຂຜົນການກວດກາຕາມຜົນການກວດສອບ ຕາມມະຕິຕົກລົງຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຕາມການສະເໜີຂອງອົງການກວດສອບແຫ່ງລັດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ;
6. ສ້າງແຜນການເຄື່ອນໄຫວປະຈຳເດືອນ ໃນການຕິດຕາມ, ຊຸກຍູ້ການປະຕິບັດຜົນການກວດກາພັກ, ກວດກາລັດ ຂອງກະຊວງ-ອົງການ ແລະ ແຂວງ ຕາມຄວາມຮັບຜິດຊອບຂອງພະແນກ;
7. ສະຫຼຸບ, ລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດຜົນການກວດກາພັກ, ກວດກາລັດ ຂອງບັນດາການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມຄວາມຮັບຜິດຊອບຂອງພະແນກ;
8. ສະຫຼຸບລາຍງານການຈັດຕັ້ງເຄື່ອນໄຫວວຽກງານວິຊາສະເພາະ ປະຈຳເດືອນ, 03 ເດືອນ, 06 ເດືອນ, 01 ປີ ແລະ 05 ປີ;



SCANNED WITH WIZSCAN

14. ສຶກສາອົບຮົມ, ຄຸ້ມຄອງ, ບໍາລຸງ-ກໍ່ສ້າງ, ນໍາໃຊ້ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ; ຄຸ້ມຄອງປົກປັກຮັກສາ, ນໍາໃຊ້ວັດຖຸອຸປະກອນ, ພາຫະນະ ແລະ ຊັບສິນຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງກົມ;
15. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງ ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ.

**ມາດຕາ 4 ຂອບເຂດສິດ**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ມີຂອບເຂດສິດ ດັ່ງນີ້:

1. ສະເໜີ ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ອອກຂໍ້ຕົກລົງ ໃຫ້ດໍາເນີນການຕິດຕາມ, ຊຸກຍູ້ ແລະ ກວດກາ ການປະຕິບັດຜົນການກວດກາ ຕໍ່ການຈັດຕັ້ງກະຊວງ-ອົງການ, ແຂວງ, ນະຄອນຫຼວງ ພາກສ່ວນທີ່ກ່ຽວຂ້ອງ ແລະ ເປົ້າໝາຍທີ່ໄດ້ຕົກລົງແກ້ໄຂຜົນການກວດກາ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ;
2. ປະສານສົມທົບບັນດາກົມທີ່ຂຶ້ນກັບຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ກົມກວດກາ ບັນດາກະຊວງ-ອົງການ, ຄະນະກວດກາພັກ ແລະ ອົງການກວດກາລັດແຂວງ, ນະຄອນຫຼວງ ໃນການສະໜອງຂໍ້ມູນການແກ້ໄຂຜົນຂອງກວດກາ, ຜົນການກວດສອບຕາມມະຕິຕົກລົງຂອງສະພາແຫ່ງຊາດໄດ້ຮັບຮອງ, ຄໍາຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດກ່ຽວກັບຄະດີສໍ້ລາດບັງຫຼວງ ຕາມການຕົກລົງຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;
3. ສະເໜີມາດຕະການ, ຮູບການ, ວິທີການແກ້ໄຂຜົນຂອງການກວດກາໃຫ້ຖືກຕ້ອງບົນພື້ນຖານລະບຽບກົດໝາຍ ຕໍ່ກັບການຈັດຕັ້ງກະຊວງ-ອົງການ, ແຂວງ, ນະຄອນຫຼວງ ພາກສ່ວນທີ່ກ່ຽວຂ້ອງ ແລະ ບຸກຄົນ ທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຕາມຂໍ້ຕົກລົງ ຂອງອົງການທີ່ມີສິດ ກ່ຽວກັບການແກ້ໄຂຜົນການກວດກາ ຕໍ່ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;
4. ລາຍງານສະເໜີຂໍຄໍາເຫັນຊີ້ນໍາ ຈາກປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ເພື່ອແກ້ໄຂວຽກສໍາຄັນຈໍາເປັນ ແລະ ຮີບດ່ວນ ທີ່ພົວພັນເຖິງພາລະບົດບາດ ແລະ ໜ້າທີ່ຂອງຕົນ;
5. ສະເໜີຕໍ່ຜູ້ອອກຂໍ້ຕົກລົງແກ້ໄຂຜົນການກວດກາ ຊີ້ນໍາໃຫ້ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາແກ້ໄຂ ຫຼື ແກ້ໄຂຄືນ ໃນກໍລະນີຖ້າເຫັນວ່າອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາບໍ່ປະຕິບັດຕາມການຕົກລົງແກ້ໄຂ, ແກ່ຍາວເວລາ ຫຼື ບໍ່ແກ້ໄຂຜົນການກວດກາ ໃຫ້ນໍາໃຊ້ມາດຕະການທີ່ກໍານົດໄວ້ໃນມາດຕາ 29 ແລະ ມາດຕາ 30 ຂອງກົດໝາຍວ່າດ້ວຍກວດກາລັດ (ສະບັບປັບປຸງ);
6. ສະເໜີ ຕໍ່ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ເພື່ອສະເໜີຕໍ່ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ-ອົງການ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ເພື່ອປັບປຸງແກ້ໄຂ ແລະ ລົບລ້າງເນື້ອໃນຂໍ້ຕົກລົງ, ຄໍາສັ່ງ ແລະ ນິຕິກໍາຕ່າງໆ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບການປະຕິບັດຜົນຂອງການກວດກາ;
7. ຮຽກເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມປຶກສາຫາລື ກ່ຽວກັບການແກ້ໄຂຜົນການກວດກາ ໂດຍຜ່ານຫ້ອງການຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;
8. ສະເໜີ ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນຂອງການກວດກາທີ່ເຫັນວ່າບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງລັດ;
9. ສະເໜີ ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍ, ຍ້ອງຍໍ, ລົງວິໄນຕໍ່ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ ບົນພື້ນຖານການເຫັນດີເປັນເອກະພາບພາກສ່ວນທີ່ກ່ຽວຂ້ອງ;



SCANNED WITH WIZSCAN

10. ປະສານສົມທົບກັບພາກສ່ວນອື່ນໆທີ່ເຫັນວ່າມີການພົວພັນກ່ຽວກັບວຽກງານ ການເຄື່ອນໄຫວຂອງພະແນກ ຫຼື ຕິດພັນກັບການແກ້ໄຂຜົນການກວດກາ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ພະແນກຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເຂດ 2**

ພະແນກຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເຂດ 2 ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ ແລະ ແຜນດຳເນີນງານ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ເປັນເສນາທິການໃຫ້ແກ່ຄະນະກົມກ່ຽວກັບການຫັນຂໍ້ກຳນົດ, ລະບຽບການ, ວິທີການ, ມາດຕະການກ່ຽວກັບການດຳເນີນການຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
2. ຕິດຕາມ, ຊຸກຍູ້ການແກ້ໄຂຜົນຂອງການກວດກາ ຢູ່ 08 ກະຊວງ, 10 ອົງການ ແລະ 9 ແຂວງ ຄື: ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງສຶກສາທິການ ແລະ ກິລາ, ກະຊວງພາຍໃນ, ບັນດາອົງການປະກອບມີ ສູນກາງສະຫະພັນກຳມະບານລາວ, ຄະນະໂຄສະນາອົບຮົມສູນກາງພັກ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫ້ອງວ່າການສຳນັກງານປະທານປະເທດ, ຄະນະຈັດຕັ້ງສູນກາງພັກ, ສານປະຊາຊົນສູງສຸດ, ສູນກາງແນວລາວສ້າງຊາດ, ອົງການກາແດງລາວ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະຖາບັນຄົ້ນຄ້ວາເສດຖະສາດ-ສັງຄົມແຫ່ງຊາດ, ບັນດາທ້ອງຖິ່ນປະກອບມີ ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ, ແຂວງສາລະວັນ, ແຂວງຈຳປາສັກ, ແຂວງເຊກອງ ແລະ ແຂວງອັດຕະປື;
3. ເກັບກຳຂໍ້ມູນ, ສະຖິຕິ ການຕິດຕາມ, ຊຸກຍູ້ ແລະ ການແກ້ໄຂຜົນຂອງການກວດກາພັກ, ກວດກາລັດ, ສະຫຼຸບສັງລວມການປະຕິບັດຜົນການກວດກາ ຂອງກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ;
4. ເກັບກຳຂໍ້ມູນ, ສະຖິຕິ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຜົນການກວດກາ ຢູ່ຂັ້ນກະຊວງ, ຂັ້ນແຂວງ ແລະ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ເດັດຂາດຄະດີສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ;
5. ຕິດຕາມ, ຊຸກຍູ້ ການແກ້ໄຂຜົນການກວດກາຕາມຜົນການກວດສອບ ຕາມມະຕິຕົກລົງຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຕາມການສະເໜີຂອງອົງການກວດສອບແຫ່ງລັດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ;
6. ສ້າງແຜນການເຄື່ອນໄຫວປະຈຳເດືອນ ໃນການຕິດຕາມ, ຊຸກຍູ້ການປະຕິບັດຜົນການກວດກາພັກ, ກວດກາລັດ ຂອງກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງ ຕາມຄວາມຮັບຜິດຊອບຂອງພະແນກ;
7. ສະຫຼຸບ, ລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດຜົນການກວດກາພັກ, ກວດກາລັດ ຂອງບັນດາການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມຄວາມຮັບຜິດຊອບຂອງພະແນກ;
8. ສະຫຼຸບລາຍງານການຈັດຕັ້ງເຄື່ອນໄຫວວຽກງານວິຊາສະເພາະ ປະຈຳເດືອນ, 03 ເດືອນ, 06 ເດືອນ, 01 ປີ ແລະ 05 ປີ;
9. ສຳເນົາ ເກັບມ້ຽນບັນດາເອກະສານ ການແກ້ໄຂຜົນຂອງການກວດກາຂອງແຂວງ ແລະ ນະຄອນຫຼວງວຽງຈັນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ;



SCANNED WITH WIZSCAN

10. ປະສານສົມທົບກັບພາກສ່ວນອື່ນໆທີ່ເຫັນວ່າມີການພົວພັນກ່ຽວກັບວຽກງານ ການເຄື່ອນໄຫວຂອງພະແນກ ຫຼື ຕິດພັນກັບການແກ້ໄຂຜົນການກວດກາ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 10 ຫຼັກການວິທີເຮັດວຽກ**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກົມ;
2. ມີການແບ່ງງານ, ແບ່ງຄວາມຮັບຜິດຊອບ ໃຫ້ບຸກຄົນໃນໝູ່ຄະນະຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ ລະບຽບການ ແລະ ຫຼັກການລວມຂອງພັກ, ກົດໝາຍ ແລະ ລະບຽບການລວມຂອງລັດ ໃນການຈັດຕັ້ງປະຕິບັດຕາມແຜນການປະຈຳປີ, 05 ປີ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ຜັນຂະຫຍາຍໃຫ້ເປັນອັນລະອຽດ.

**ມາດຕາ 11 ແບບແຜນວິທີເຮັດວຽກ**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຄື່ອນໄຫວວຽກງານຕາມພາລະບົດບາດ, ແຜນຍຸດທະສາດ, ທິດທາງ, ແຜນການຂອງ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ທີ່ໄດ້ວາງອອກໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການດ້ານວິຊາສະເພາະຂອງກົມ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີກຳນົດເວລາ, ເປົ້າໝາຍ ແລະ ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີຄາດໝາຍແຕ່ລະໄລຍະ;
3. ເຮັດວຽກມີການຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບ, ປະເມີນຜົນ ແລະ ຖອດຖອນບົດຮຽນເປັນປົກກະຕິ ແຕ່ລະເດືອນ, ໄຕມາດ, 06 ເດືອນ, ປະຈຳປີ ແລະ ລາຍງານຕໍ່ຄະນະພັກ, ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ເປັນປົກກະຕິ;
4. ປະສານສົມທົບກັບຫ້ອງການ, ບັນດາກົມ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງເພື່ອປຶກສາຫາລືໃນການແກ້ໄຂວຽກງານຕ່າງໆໃຫ້ບັນລຸຜົນສຳເລັດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 12 ງົບປະມານ ແລະ ຕາປະທັບ**

ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ນຳໃຊ້ງົບປະມານຂອງ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ມີຕາປະທັບ ເພື່ອນຳໃຊ້ເຂົ້າໃນວຽກງານລັດຖະການ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

- ຫ້ອງການ ແລະ ບັນດາກົມ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;



SCANNED WITH WIZSCAN

- ມອບໃຫ້ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ ຄົ້ນຄວ້າ, ເຜີຍແຜ່ເຊື່ອມຊຶມ, ກຳແໜ້ນ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.

**ມາດຕາ 14** **ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ຂອງປະທານອົງການກວດກາລັດຖະບານ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນການກວດກາ ສະບັບເລກທີ 266/ອກລ, ລົງວັນທີ 26 ກໍລະກົດ 2019 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກວດກາສູນກາງພັກ**

ຄຳພັນ ພົມມະທັດ



SCANNED WITH WIZSCAN